LAO PREMIER
INTERNATIONAL LAW OFFICE LIMITED

NEWSLETTER - 1 APRIL 2026

# เปັນຫຍັງຕ້ອງເລືອກ ສປປ ລາວ ສຳລັບການບໍລິການສູນຂໍ້ມູນ

## ຕອນທີ 3 - ການຂະຫຍາຍຕົວຂອງການບໍລິການສູນຂໍ້ມູນໃນ ສປປ ລາວ : ສະຖານະການໃນປັດຈຸບັນ

Written by: Laopremier Team

## ການບໍລິການສູນຂໍ້ມູນ ຢູ່ ສປປ ລາວ ໃນປັດຈຸບັນ

ໃນປັດຈຸບັນ, ທຸລະກິດການບໍລິການສູນຂໍ້ມູນທັງ 04 ປະເພດ (Tier I-IV) ແມ່ນໄດ້ເປີດໃຫ້ຍື່ນຄຳຮ້ອງເພື່ອຂໍອະນຸຍາດດຳເນີນທຸລະກິດໃນ ສປປ ລາວ ແລ້ວ. **ກົມເຕັກໂນໂລຊີດິຈິຕອນ**, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເປັນໜ່ວຍງານຮັບ ແລະ ພິຈາລະນາຄຳຮ້ອງດັ່ງກ່າວ. ນັກລົງທຶນຈະຕ້ອງມີທຶນຈົດທະບຽນພຽງພໍ, ມີຄວາມພ້ອມທາງດ້ານເຕັກນິກທີ່ເໝາະສົມ ພ້ອມທັງປະຕິບັດຕາມເງື່ອນໄຂ ແລະ ຂໍ້ກຳນົດທີ່ໄດ້ກຳນົດໄວ້ ຈຶ່ງຈະໄດ້ຮັບໃບອະນຸຍາດດຳເນີນທຸລະກິດ.

- ສຳລັບລາຍລະອຽດເພີ່ມເຕີມກ່ຽວກັບການຂໍໃບອະນຸຍາດດຳເນີນທຸລະກິດ: *ຕອນທີ 2 - ການລົງທຶນໃນການບໍລິການສູນຂໍ້ມູນໃນ ສປປ ລາວ : ເຫດຜົນ ແລະ ວິທີການ.*

ໃນປັດຈຸບັນ, ໃນ ສປປ ລາວ ມີປະມານ **05 ບໍລິສັດ** ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນການບໍລິການສູນຂໍ້ມູນ ດັ່ງນີ້:

1) ບໍລິສັດ ອິນເຕີເນເຊີນນໍ ດາຕ້າ ເຊັນເຕີ້ ຈຳກັດຜູ້ດຽວ;
2) ບໍລິສັດ ແອວເອ ສູນກາງຂໍ້ມູນຂ່າວສານ ຈຳກັດຜູ້ດຽວ;
3) ບໍລິສັດ ໂກໂບ້ດີຈີຕ້ອນເມເນເຈີເມັ້ນໂຊລູເຊີນ ຈຳກັດຜູ້ດຽວ;
4) ບໍລິສັດ ລາວ ດີຊີ ໄອທີ ຈຳກັດຜູ້ດຽວ;
5) ບໍລິສັດ ລາວໂທລະຄົມມະນາຄົມ ມະຫາຊົນ.

ບັນດາບໍລິສັດທີ່ໄດ້ກ່າວຂ້າງເທິງນີ້ ສ່ວນໃຫຍ່ແລ້ວແມ່ນໄດ້ຈົດທະບຽນກິດຈະການເປັນຜູ້ໃຫ້ບໍລິການລະບົບພລາດຟອມ (Platform as a Service) ແລະ ບໍລິການລະບົບຊອບແວ (Software as a Service). ໃນຂະນະດຽວກັນ, ການໃຫ້ບໍລິການລະບົບພື້ນຖານໂຄງລ່າງເຕັກໂນໂລຊີ (Infrastructure as a Service) ກໍຍັງມີຈຳນວນຈຳກັດ ເນື່ອງຈາກການໃຫ້ບໍລິການດັ່ງກ່າວມີຂໍ້ກຳນົດທາງດ້ານເຕັກນິກທີ່ເຂັ້ມງວດ ແລະ ຕ້ອງໃຊ້ທຶນໃນການລົງທຶນສູງໃນການໃຫ້ບໍລິການດັ່ງກ່າວ.






## ທຸລະກິດການເກັບຮັກສາຂໍ້ມູນອື່ນ

ນອກຈາກການບໍລິການສູນຂໍ້ມູນແລ້ວ ທຸລະກິດການບໍລິການໂຄງລ່າງຄລາວ (Cloud Service Provider) ກໍ່ໄດ້ຮັບການອະນຸຍາດໃຫ້ດຳເນີນທຸລະກິດໃນ ສປປ ລາວ ແລ້ວ.

### <u>ການບໍລິການໂຄງລ່າງຄລາວ (Cloud Service Provider)</u>

ການບໍລິການໂຄງລ່າງຄລາວແມ່ນການບໍລິການເຊົ່າພື້ນທີ່ເກັບຂໍ້ມູນຂ່າວສານ, ບໍລິການເກັບຂໍ້ມູນ, ປະມວນຜົນ ແລະ ບໍລິຫານຈັດການຂໍ້ມູນ ລວມເຖິງການໃຫ້ບໍລິການແພລດຟອມ, ໂຄງສ້າງພື້ນຖານ ແລະ ແລະ ແອັບພລິເຄຊັນ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ອົງການຕ່າງໆ.

ກົດໝາຍຂອງ ສປປ ລາວ ໄດ້ແບ່ງການບໍລິການໂຄງລ່າງຄລາວອອກເປັນ 02 ປະເພດ ດັ່ງນີ້:

1)**ປະເພດທີ 1**: ການບໍລິການໂຄງລ່າງຄລາວທີ່ນຳໃຊ້ພື້ນຖານໂຄງລ່າງທີ່ຢູ່ໃນ ສປປ ລາວ; ແລະ
2)**ປະເພດທີ 2**: ການບໍລິການໂຄງລ່າງຄລາວທີ່ນຳໃຊ້ພື້ນຖານໂຄງລ່າງທີ່ຢູ່ຕ່າງປະເທດ.



ນອກຈາກການຍື່ນຄໍາຮ້ອງ ແລະ ການປະກອບເອກະສານຕາມທີ່ລະບຽບການທີ່ກ່ຽວຂ້ອງກໍານົດໄວ້ຢ່າງຄົບຖ້ວນແລ້ວ, ເງື່ອນໄຂທີ່ສໍາຄັນໃນການດໍາເນີນທຸລະກິດການບໍລິການໂຄງລ່າງຄລາວ ມີດັ່ງນີ້:

- **<u>ມາດຕະຖານດ້ານເຕັກນິກ</u>**: ລະບົບຕ້ອງສອດຄ່ອງຕາມມາດຕະຖານມີປະສິດທິພາບ, ໃຊ້ງານງ່າຍ ແລະ ງ່າຍໃນການຕິດຕັ້ງ ແລະ ບໍາລຸງຮັກສາ;
- **<u>ມາດຕະຖານດ້ານຄວາມປອດໄພ</u>**: ລະບົບຕ້ອງມີມາດຕະການຄວາມປອດໄພທີ່ເໝາະສົມ ເຊັ່ນ: ລະບົບປ້ອງກັນຟາຍເວວ (Firewall), ກົນໄກ Anti-DDoS, ລະບົບຄວບຄຸມການເຂົ້າເຖິງ ແລະ ການຢັ້ງຢືນຕົວຕົນກ່ອນການນໍາໃຊ້ບໍລິການເພື່ອຄຸ້ມຄອງ ແລະ ປົກປ້ອງຂໍ້ມູນຂອງຜູ້ໃຊ້ບໍລິການ.

ໃນປັດຈຸບັນ, ທຸລະກິດການບໍລິການໂຄງລ່າງຄລາວທຸກປະເພດແມ່ນເປີດໃຫ້ຍື່ນຄໍາຮ້ອງເພື່ອຂໍອະນຸຍາດດໍາເນີນທຸລະກິດໃນ ສປປ ລາວ. ກົມເຕັກໂນໂລຊີດິຈິຕອນເປັນໜ່ວຍງານຮັບ ແລະ ພິຈາລະນາຄໍາຮ້ອງດັ່ງກ່າວ ໂດຍທີ່ນັກລົງທຶນຈະຕ້ອງສະແດງໃຫ້ເຫັນວ່າມີທຶນຈົດທະບຽນພຽງພໍ, ມີຄວາມພ້ອມທາງດ້ານເຕັກນິກທີ່ເໝາະສົມ ພ້ອມທັງປະຕິບັດຕາມເງື່ອນໄຂ ແລະ ຂໍ້ກໍານົດທີ່ໄດ້ກໍານົດໄວ້.
ໃບອະນຸຍາດດໍາເນີນທຸລະກິດການບໍລິການໂຄງລ່າງຄລາວ ມີ**ອາຍຸການນໍາໃຊ້ 01 ປີ** ແລະ ສາມາດຕໍ່ອາຍຸໄດ້ເມື່ອໝົດອາຍຸ.

ໃນປັດຈຸບັນ, ສປປ ລາວ ມີ **04 ບໍລິສັດ** ທີ່ໄດ້ຮັບອະນຸຍາດໃຫ້ດໍາເນີນການບໍລິການໂຄງລ່າງຄລາວ ດັ່ງນີ້:

1) ບໍລິສັດ ເຣັດດີ້ ທູ ຄອມເນັກ (ລາວ) ຈໍາກັດ;
2) ບໍລິສັດ ໂກໂບ້ດິຈິຕ້ອນເນເນເຈີເມັ້ນໂຊລູເຊິນ ຈໍາກັດຜູ້ດຽວ;
3) ບໍລິສັດ ວາບປ໌ ດາຕາ ເຕັກໂນໂລຊີ ລາວ ຈໍາກັດຜູ້ດຽວ;
4) ບໍລິສັດ ລາວໂທລະຄົມມະນາຄົມ ມະຫາຊົນ.

## ບົດສະຫຼຸບ

ນອກຈາກທຸລະກິດການບໍລິການສູນຂໍ້ມູນ ແລະ ການບໍລິການໂຄງລ່າງຄລາວແລ້ວ, ກົດໝາຍລາວຍັງອະນຸຍາດໃຫ້ດໍາເນີນທຸລະກິດດ້ານເຕັກໂນໂລຊີດິຈິຕອນໃນປະເພດອື່ນໆ ໂດຍອີງຕາມຂໍ້ກໍານົດ ແລະ ເງື່ອນໄຂໃນການອະນຸຍາດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ເຊັ່ນ:

- ການດໍາເນີນທຸລະກິດກຸ່ມຂໍ້ມູນຜູກພັນ (Blockchain)
- ການບໍລິການຖານຂໍ້ມູນມະຫາສານ (Big data)
- ການດໍາເນີນທຸລະກິດປັນຍາປະດິດ (Artificial Intelligence)
- ການບໍລິການຂໍ້ມູນຂ່າວສານຜ່ານລະບົບດິຈິຕອນ (Digital Content)

ທັງນີ້, ເງື່ອນໄຂການອະນຸຍາດ, ຂອບເຂດກິດຈະການທີ່ອະນຸຍາດ ແລະ ອາຍຸການນໍາໃຊ້ໃບອະນຸຍາດ ອາດຈະແຕກຕ່າງກັນໄປຕາມແຕ່ລັກສະນະ ແລະ ຂະໜາດຂອງທຸລະກິດແຕ່ລະປະເພດ.

ຫາກທ່ານມີຄໍາຖາມສອບຖາມກ່ຽວກັບການບໍລິການສູນຂໍ້ມູນ, ໂຄງລ່າງຄລາວ ຫຼື ທຸລະກິດດ້ານເຕັກໂນໂລຊີດິຈິຕອນອື່ນໆ

ສາມາດຕິດຕໍ່ໄດ້ທີ່ **<u>info@laopremier.com</u>**

# Why Lao PDR for Data Centers

## Episode 3 – Lao PDR's Data Center Expansion: What's Happening Now

**Written by: Laopremier Team**

## Data Center Services in Lao PDR Currently

Currently, the data center business across all four tiers (Tier I-IV) is open for license applications in the Lao PDR. The **Department of Digital Technology**, part of the Ministry of Technology and Communications, is responsible for receiving and reviewing these applications. To obtain a license, investors must demonstrate adequate registered capital, sufficient technical capacity, and compliance with the specified requirements and conditions.

- *See more about applying the license: Part 2 – Invest in Data Centers in Lao PDR : Why and How*

At present, there are approximately **5 companies** authorized to operate data center services in the Lao PDR, as follows:

1) International Data Center Sole Co., Ltd.
2) LA Data Center Sole Co., Ltd.
3) Global Digital Management Solutions Sole Co., Ltd.
4) Lao DC IT Sole Co., Ltd.
5) Lao Telecommunication Public Co., Ltd.

Most of the above-mentioned companies have registered their business activities as providers of Platform as a Service (PaaS) and Software as a Service (SaaS). By contrast, only a limited number have registered as Infrastructure as a Service (IaaS) providers, primarily due to the more stringent technical requirements and the substantial capital investment required for such operations.






## Other Data Storage Businesses

In addition to data center services, cloud service provider businesses are also permitted to operate in the Lao PDR.

### Cloud Service Provider

Cloud service providers offer information storage rental services, data storage, data processing and management services, as well as cloud-based platforms, infrastructure, and applications to individuals, legal entities, and organizations.

Under Lao laws, cloud service providers are classified into 2 categories:

1) **Type 1**: Cloud service infrastructure utilizing facilities located within the Lao PDR; and
2) **Type 2**: Cloud service infrastructure utilizing facilities located outside the Lao PDR.



Along with submitting a complete application dossier and all necessary supporting documents according to the relevant regulatory requirements, the main business conditions for establishing cloud services include the following:

- **Technical Standards:** The system must meet standards relating to efficiency, user-friendliness, and maintainability;
- **Security Standards:** The system must implement appropriate security measures, including firewall protection, Anti-DDoS mechanisms, access control, and identity verification processes, in order to safeguard users' information.

At present, cloud service businesses in all categories are fully open for license applications in the Lao PDR. The Department of Digital Technology is authorized to receive and review applications for the issuance of the relevant licenses, subject to the investor demonstrating adequate registered capital, sufficient technical capacity, and compliance with all prescribed requirements and conditions.

The cloud service provider business license is valid for 1 year and may be renewed upon expiration.

Currently, there are **4 companies** duly authorized to operate cloud service businesses in the Lao PDR, as follows:

1) Ready To Connect (Laos) Co., Ltd.
2) Global Digital Management Solutions Sole Co., Ltd.
3) Warp Data Technology Lao Sole Co., Ltd.
4) Lao Telecommunication Public Co., Ltd.

## Epilogue

In addition to data center and cloud service provider businesses, Lao laws also permit certain other digital technology businesses, subject to compliance with applicable regulatory requirements and licensing conditions. Such businesses may include, for example:

- Blockchain
- Big Data
- Artificial Intelligence
- Digital Content

The specific licensing requirements, scope of permitted activities, and validity period of the license may vary depending on the nature and scale of the business.

Should you inquire about data center services, cloud services or other digital technology businesses, please get in touch with **info@laopremier.com**



www.laopremier.com +856-21 265 471 info@laopremier.com